ສະຫນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ກອງປະຊຸມຄົບຄະນະບໍລິຫານງານພັກ ທຫລ ຄັ້ງທີ 4 ສະໄໝທີ IV





ໃນວັນທີ 07 ມິຖຸນາ 2021, ອົງຄະນະພັກທະນາຄານແຫ່ງ ສປປ ລາວ ໄດ້ດຳເນີນກອງປະຊຸມຄົບຄະນະບໍລິຫານງານພັກຄັ້ງທີ 4 ສະໄໝທີ IV ຂອງຕົນຢ່າງເປັນທາງການ ໂດຍການເປັນປະທານຂອງສະຫາຍ ສອນໄຊ ສິດພະໄຊ ກຳມະການສູນກາງພັກ, ເລຂາຄະນະພັກທະນາຄານແຫ່ງ ສປປ ລາວ ແລະ ມີບັນດາສະຫາຍຄະນະບໍລິຫານງານພັກທະນາຄານແຫ່ງ ສປປ ລາວ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງຕົ້ນຕໍຂອງກອງປະຊຸມໃນຄັ້ງນີ້ ແມ່ນເພື່ອສະຫຼຸບຕີລາຄາການຊີ້ນຳ-ນຳພາວຽກງານຮອບດ້ານຂອງຄະນະພັກທະນາຄານແຫ່ງ ສປປ ລາວ ໄລຍະ 6 ເດືອນຕົ້ນປີ ແລະ ກຳນົດທິດທາງແຜນການ 6 ເດືອນທ້າຍປີ 2021; ນອກນີ້, ຍັງໄດ້ພ້ອມກັນເຊື່ອມຊຶມກຳແໜ້ນບັນດາເອກະສານສຳຄັນຂອງຂັ້ນເທິງຈຳນວນໜຶ່ງ ແລະ ປຶກສາຫາລືວຽກງານສຳຄັນທີ່ຕິດພັນກັບຂະແໜງການທະນາຄານ ເປັນຕົ້ນແມ່ນ: ❶ ຮ່າງວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ (2021-2023); ❷ ການສ້າງແຜນງານ-ໂຄງການຂອງທະນາຄານແຫ່ງ ສປປ ລາວ 5 ປີ (2021-2025) ແລະ ❸ ຄົ້ນຄວ້າພິຈາລະນາກ່ຽວກັບລະບຽບການທີ່ຕິດພັນກັບວຽກງານພະນັກງານ; ບັນດາສະຫາຍທີ່ເຂົ້າຮ່ວມທັງຫລາຍ ໄດ້ພ້ອມກັນຍົກສູງຄວາມຮັບຜິດຊອບທາງການເມືອງຂອງຕົນ ໃນການຄົ້ນຄວ້າ-ປະກອບຄວາມຄິດຄວາມເຫັນ ແລະ ເປັນເອກະພາບສູງຕໍ່ບັນດາເນື້ອໃນ 4 ເອກະສານຕົ້ນຕໍ ນັບທັງດ້ານຕັ້ງໜ້າ ແລະ ດ້ານຂໍ້ຄົງຄ້າງ ໂດຍສະເພາະບັນຫາຄວາມຫຍຸ້ງຍາກທີ່ກົດໜ່ວງຖ່ວງດຶງການນຳພາປະຕິບັດໜ້າທີ່ການເມືອງຂອງຕົນ ໃນໄລຍະຜ່ານມາ ເພື່ອເປັນພື້ນຖານໃນການຄົ້ນຄວ້າ-ກຳນົດທິດທາງປັບປຸງແກ້ໄຂການເຄື່ອນໄຫວແຕ່ລະໜ້າວຽກໃນຕໍ່ໜ້າ ຢ່າງມີປະສິດທິຜົນສູງເພື່ອສະໜັບສະໜູນໃຫ້ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ໃຫ້ບັນລຸຕາມຄາດໝາຍເປັນຢ່າງດີ.

**#ຂ່າວໂດຍ: ກົມຈັດຕັ້ງແລະພະນັກງານ**

**#ພາບໂດຍ: ນາງ ປາໄນ ພັນທະລາ**

## ເສດຖະກິດຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ